Lao

# ກິດເກນ ວັດແທກເບິ່ງ ບັນຫາການພະນັນ.




| *ຫລິ້ນການພະນັນ ເພື່ອ* | *ເຫັນວ່າເປັນການ* | *ສາມາດເຮັດໃຫ້* |
| --- | --- | --- |
| ຄວາມມ່ວນຊື່ນ | ນຳເອົາເງິນຄືນ (ຫລິ້ນເອົາທຶນຄືນ) | ເກີດຄວາມກົດດັນທາງດ້ານຈິດໃຈ |
| ເປັນການພັກຜ່ອນຢ່ອນໃຈ | ທີ່ຮູ້ສຶກຜິດ ໃນໃຈ | ມີຄວາມຄິດ ຢາກຂ້າຕົວຕາຍ |
| ເປັນການສັງສັນ ໝູ່ເພື່ອນ | ເຮັດໃຫ້ ຜິດຖຽງກັນ | ມີການຢ່າຮ້າງ |
| ສິ່ງແວດລ້ອມ ທີ່ດີ | ລັກລີ້ເຊື່ອງ ການພະນັນ | ເປັນໜີ້ສິນ ແລະ ທຸກຍາກ ຂາດເຂີນ |
| (ໃນແວດວົງໝູ່ເພື່ອນພີ່ນ້ອງ) | ເສັຽເງິນຫລາຍກ່ວາທີ່ກຳໜົດໄວ້ | ມີການເຮັດຜິດກົດໝາຍ ອາຊຍາກັມ |

**Adapted from Productivity Commission 1999, Australia's Gambling Industries, Report No. 10.*

## *ສິ່ງທີ່ຊີ້ໃຫ້ເຫັນ ວ່າມີບັນຫາຕິດການພະນັນ ແລະ ວິທີແກ້ໄຂບັນຫານີ້*

ມີຫລາຍສິ່ງຫລາຍແນວ ທີ່ອາດຈະຊີ້ໃຫ້ເຫັນວ່າ ທ່ານຕິດ ຫລື ກຳລັງຈະເລີ້ມ ຕິດການພະນັນຈົນມີບັນຫາ. ໃຊ້ຄຳຖາມຕໍ່ໄປນີ້ ຖາມທ່ານເອງເບິ່ງ!



- ➢ ທ່ານຄິດຫາ, ຢາກຫລິ້ນການພະນັນ ທຸກໆມື້ບໍ່?
- ➢ ທ່ານນຳເງິນບໍ່? ໝາຍຄວາມວ່າ ທ່ານຫລິ້ນເສັຽແລ້ວ ທ່ານກັບໄປຫລິ້ນເພື່ອຢາກໄດ້ ທຶນຄືນບໍ່?
- ➢ ທ່ານຮູ້ສຶກ ວ່າມີຄວາມກົດດັນ ທາງດ້ານຈິດໃຈ ແລະ ທາງດ້ານການເງິນ ຍ້ອນວ່າ ທ່ານຫລິ້ນການພະນັນບໍ່?
- ➢ ທ່ານລີ້ເຊື່ອງ ຫລື ບໍ່ເປີດເຜີຍ ການຫລິ້ນການພະນັນ ຂອງທ່ານຈາກຄົນທີ່ໃກ້ຊິດທ່ານບໍ່?
- ➢ ທ່ານຢືມເງິນ ເພື່ອຈະເອົາໄປຫລິ້ນການພະນັນບໍ່?
- ➢ ທ່ານຜິດຖຽງກັບ ຄົນໃນຄອບຄົວ ຫລື ໝູ່ເພື່ອນ ກ່ຽວກັບເຣື່ອງເງິນ ຫລື ການພະນັນບໍ່?
- ➢ ທ່ານຫລິ້ນການພະນັນ ຈົນບໍ່ມີເງິນເຫລືອຢູ່ໃນຖົງເລື້ອຍໆ ແມ່ນບໍ່?
- ➢ ທ່ານຈະບໍ່ຈ່າຍ ຄ່າບິລ ຫລື ໜີ້ສິນຕ່າງໆ ຍ້ອນວ່າທ່ານ ເອົາເງິນໄວ້ໄປຫລິ້ນການພະນັນບໍ່?
- ➢ ທ່ານຮູ້ດີວ່າ ທ່ານບໍ່ໄດ້ເວົ້າຄວາມຈິງ ແລະ ສັດຊື່ ກ່ຽວກັບການທີ່ ທ່ານຫລິ້ນການພະນັນ ຫລາຍເທື່ອປານໃດ ຫລື ວ່າເສັຽເງິນ ຫລາຍປານໃດ ແລ້ວ?

## *ວິທີແກ້ໄຂບັນຫາ ການຕິດການພະນັນ*

- ຕັ້ງເວລາ ແລະ ກຳໜົດຈຳນວນເງິນທີ່ຈະເອົາໄປຫລິ້ນ - ຢ່າກາຍເສັ້ນໄປ (ໝາຍຄວາມວ່າ ກຳໜົດເງິນ ແລະ ກຳໜົດເວລາໄວ້ ວ່າຈະຫລິ້ນເທົ່າໃດ ແລະ ດົນປານໃດ? ເມື່ອເຖິງກຳໜົດແລ້ວຢຸດໂລດ).
- ຈົດບັນທຶກໄວ້ ແຕ່ລະມື້ ເງິນທີ່ຫລິ້ນໄດ້ ແລະ ຫລິ້ນເສັຍ.
- ພະຍາຍາມຢ່າໄປ ຄາຊີໂນ, ຄລັບ, ພັບ, ທີເອບີ ຫລື ສະຖານທີ່ອື່ນໆ ທີ່ທ່ານເຄີຍຫລິ້ນການພະນັນ ແຕ່ກ່ອນມາ.
- ສອບຖາມເບິ່ງຢູ່ບ່ອນທີ່ມີການຫລິ້ນການພະນັນວ່າ ເຂົາມີ ຣະບົບການ ເກືອດກັນຕົນເອງບໍ່ໃຫ້ ຫລິ້ນການພະນັນບໍ່ (self-exclusion procedure) ຖ້າມີ ກໍໃຫ້ຂໍໃຊ້ ການບໍຣິການນີ້.
- ແບ່ງເວລາທີ່ທ່ານ ຈະໃຊ້ເອົາໄປຫລິ້ນການພະນັນ ມາເປັນເວລາຕື່ມ ສຳລັບຫາຄວາມສຸຂນຳຄອບຄົວ, ສຳລັບຫລິ້ນກິລາ ຫລື ກິຈກັມອື່ນໆ ກັບໝູ່ເພື່ອນ.

## *ຕ້ອງການຄວາມຊ່ວຍເຫລືອ ກະຣຸນາຕິດຕໍ່*

> **Multicultural Problem Gambling Service for NSW / Tollfree 1800 856 800 .**
> G – Line 1800 633 635 ( 24 hours / 7 days a week).

Multicultural Problem Gambling Service for NSW
strengthening people and families

Multicultural Problem Gambling Service is a joint initiative of the Community Relations Commission For a multicultural NSW and Sy
Financial assistance for this project was provided by the New South Wales Government from the Responsible Gambling Fund (RG
The views expressed in this publication however, are solely those of the author/s.